**ສັນຍາ**

**ລະຫວ່າງ ລັດຖະບານ**

**ແຫ່ງ**

**ສາທາລະນະລັດ ປະຊາຊົນຈີນ**

**ລັດຖະບານ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ**

**ລັດຖະບານ ແຫ່ງ ສະຫະພາບ ມຽນມາ**

**ວ່າດ້ວຍການກຳນົດຈຸດຄົບເສັ້ນຊາຍແດນຂອງສາມປະເທດ**

*****************

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ, ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແລະ ລັດຖະບານ ແຫ່ງ ສະຫະພາບ ມຽນມາ,

ດ້ວຍຈຸດປະສົງ ຢາກປົກປັກຮັກສາຜົນປະໂຫຍດອັນເປັນພື້ນຖານ ຂອງປະຊາຊົນສາມຊາດ, ເພື່ອປັບປຸງ ແລະ ຂະຫຍາຍການພົວພັນມິດຕະພາບ ຖານບ້ານໃກ້ເຮືອນຄຽງ ລະຫວ່າງ ສາມປະເທດ ບົນພື້ນຖານຫລັກການເຄົາລົບ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ຮຸກຮານກັນ, ບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ຢູ່ຮ່ວມກັນໂດຍສັນຕິ,

ເພື່ອສ້າງເຂດຈຸດຄົບເສັ້ນຊາຍແດນ ລະຫວ່າງ ສາມປະເທດຈີນ_ລາວ ແລະ ມຽນມາ ໃຫ້ເປັນເຂດແດນສັນຕິພາບອັນຖາວອນ, ມິດຕະພາບ ແລະ ການຮ່ວມມື,

ໂດຍຜ່ານຈາກການປຶກສາຫາລືດ້ວຍໄມຕີຈິດ ມິດຕະພາບ ໄດ້ຕົກລົງໃນສັນຍາສະບັບນີ້ ໂດຍມີບັນດາຂໍ້ຄວາມດັ່ງລຸ່ມນີ້ :

<u>ມາດຕາ 1</u>

1. ພາຄີຂອງສັນຍາສາມຝ່າຍຕົກລົງວ່າ ຈຸດຄົບເສັ້ນຊາຍແດນມຽນມາ, ຈີນ ແລະ ລາວ ຕັ້ງຢູ່ບ່ອນຄົບກັນ ລະຫວ່າງ ເສັ້ນຊາຍແດນຈີນ_ລາວ ແລະ ເຄິ່ງກາງສາຍນ້ຳຂອງສາຍທາງເດີນເຮືອ (ບ່ອນນ້ຳເລິກທີ່ສຸດ) ຂອງແມ່ນ້ຳລ້ານຊ້າງ/ນ້ຳຂອງ ທີ່ຢູ່ທາງທິດໃຕ້ຂອງບ່ອນຄົບກັນ ລະຫວ່າງ ເຄິ່ງກາງສາຍນ້ຳຂອງນ້ຳຫລ້າ ແລະ ແມ່ນ້ຳລ້ານຊ້າງ/ນ້ຳຂອງ. ຈາກບ່ອນຄົບກັນ ລະຫວ່າງ ເຄິ່ງກາງສາຍນ້ຳຂອງ ນ້ຳຫລ້າ ແລະ ແມ່ນ້ຳລ້ານຊ້າງ/ນ້ຳຂອງໄປທາງທິດໃຕ້ ຕາມເຄິ່ງກາງສາຍນ້ຳຈີນເຖິງຈຸດຄົບກັນຂອງເສັ້ນຊາຍແດນຂອງສາມປະເທດ ແມ່ນເສັ້ນຊາຍແດນມຽນມາ_ຈີນ. ຢູ່ທັງສອງຝັ່ງແມ່ນ້ຳລ້ານຊ້າງ/ນ້ຳຂອງ ຂອງຈຸດຄົບເສັ້ນຊາຍແດນສາມປະເທດ ໄດ້ປັກຫລັກໝາຍຊາຍແດນເບື້ອງລະຫລັກ ( ຂະໜາດ ແລະ ຮູບແບບຂອງຫລັກໝາຍຊາຍແດນໃຫ້ເບິ່ງຕາມເອກະສານຕິດແນບເລກ 1 ). ຫລັກໝາຍຈຸດຄົບເສັ້ນຊາຍແດນຂອງສາມປະເທດມຽນມາ,ຈີນ ແລະ ລາວ ເລກທີ່ 1 ( ຫລັກໝາຍຊາຍແດນ ຈີນ_ລາວ ເລກທີ່ 45 ) ຕັ້ງຢູ່ເສັ້ນຮຸ້ງເໜືອ 21° 33' 52"4 ແລະ ເສັ້ນແວງຕາເວັນອອກ 101° 08' 40"5 ໃນເບື້ອງຝັ່ງຕາເວັນອອກຂອງແມ່ນ້ຳລ້ານຊ້າງ/ນ້ຳຂອງ ບົນເສັ້ນຊາຍແດນຈີນ_ລາວ. ຈຸດຄົບເສັ້ນຊາຍແດນຂອງສາມປະເທດ ຕັ້ງຢູ່ມູມທິດທາງແມ່ເຫລັກ 218° 03' ແລະ ມີໄລຍະ 111,6 ແມັດ ຈາກຫລັກໝາຍຊາຍແດນດັ່ງກ່າວ. ຫລັກໝາຍຈຸດຄົບເສັ້ນຊາຍແດນຂອງສາມປະເທດ ເລກທີ່ 2 (ຫລັກໝາຍຊາຍແດນ ມຽນມາ_ຈີນ ເລກທີ່ 245) ຕັ້ງຢູ່ເສັ້ນຮຸ້ງ ເໜືອ 21° 33' 47"4 ແລະ ເສັ້ນແວງຕາເວັນ ອອກ 101° 08' 36"6 ໃນເບື້ອງຝັ່ງຕາເວັນຕົກ ຂອງແມ່ນ້ຳລ້ານຊ້າງ/ນ້ຳຂອງ ໃນດິນແດນຂອງມຽນມາ. ຈຸດຄົບຂອງເສັ້ນຊາຍແດນສາມປະເທດ ຕັ້ງຢູ່ມູມທິດທາງແມ່ເຫລັກ 38° 03' ແລະ ມີໄລຍະ 78,66 ແມັດ ຈາກຫລັກໝາຍຊາຍແດນດັ່ງກ່າວ.

2. ເສັ້ນຊາຍແດນ ແລະ ຫລັກໝາຍຊາຍແດນ ຢູ່ເຂດຈຸດຄີບຂອງສາມປະເທດ ທີ່ໄດ້ພັນລະນາຢູ່ໃນມາດຕານີ້ ໄດ້ຖືກແຕ້ມເປັນສີແດງຢູ່ໃນແຜນທີ່ມາດຕາສ່ວນ 1:5000 ທີ່ມີລາຍເຊັນຂອງຜູ້ຕາງໜ້າຂອງ ສາມຝ່າຍໄດ້ຕິດຄັດເຂົ້າໃນສັນຍາສະບັບນີ້. ທີ່ຕັ້ງຂອງຈຸດຄີບເສັ້ນຊາຍແດນຂອງສາມ ປະເທດຕັ້ງຢູ່ ເສັ້ນຣຸ້ງເໜືອ 21° 33' 49"5 ແລະ ເສັ້ນແວງຕາເວັນອອກ 101° 08' 38"2 ທີ່ໄດ້ວັດແທກອອກຈາກແຜນທີ່ສະບັບນີ້.

3. ແຜນທີ່ຕິດແນບສັນຍາສະບັບນີ້ ໄດ້ນຳໃຊ້ລະບົບຈຸດພິກັດເອກກະລາດ ທີ່ຈັດທຳໂດຍຝ່າຍຈີນ. ຈຸດພິກັດຂອງຫລັກໝາຍຊາຍແດນ ໄດ້ອີງຕາມຕົວເລກຂໍ້ມູນທີ່ໄດ້ວັດແທກຢູ່ກັບທີ່ ແລະ ໄດ້ຄິດໄລ່ເຂົ້າໃນແຜນທີ່ຕິດແນບສະບັບນີ້.

## <u>ມາດຕາ 2</u>

1. ພາຄີຂອງສັນຍາ ສາມຝ່າຍຈະປົວລະບັດຮັກສາຫລັກໝາຍຊາຍແດນ ແລະ ເອົາມາດຕະການອັນຈຳເປັນ ເພື່ອປ້ອງກັນບໍ່ໃຫ້ມີການຍົກຍ້າຍ, ການທຳລາຍຫລືການເສັຍຫາຍ. ບໍ່ວ່າຝ່າຍໃດກໍ່ບໍ່ມີສິດຕັ້ງຫລັກໝາຍໃໝ່ຂື້ນແຕ່ຝ່າຍດຽວ.

2. ຝ່າຍຈີນ ແລະ ຝ່າຍລາວ ຈະຮັບຜິດຊອບຕໍ່ການປົວລະບັດຮັກສາຫລັກໝາຍຊາຍແດນ ທີ່ຕັ້ງຢູ່ບົນເສັ້ນຊາຍແດນ ຈີນ_ລາວ ໃນເບື້ອງຝັ່ງຕາເວັນອອກຂອງແມ່ນ້ຳລ້ານຊ້າງ/ນ້ຳຂອງ. ຝ່າຍມຽນມາຈະຮັບຜິດຊອບຕໍ່ການປົວລະບັດຮັກສາຫລັກໝາຍຊາຍແດນ ທີ່ຕັ້ງຢູ່ໃນດິນແດນຂອງມຽນມາ ໃນເບື້ອງຝັ່ງຕາເວັນຕົກຂອງແມ່ນ້ຳລ້ານຊ້າງ/ນ້ຳຂອງ.

3. ໃນກໍລະນີຝ່າຍໃດຝ່າຍໜຶ່ງພົບເຫັນຫລັກໝາຍຊາຍແດນ ຫລັກໃດຫລັກໜຶ່ງຖືກຍົກຍ້າຍ, ຖືກທຳລາຍຫລືຖືກເສັຍຫາຍ, ຝ່າຍນັ້ນຕ້ອງແຈ້ງໃຫ້ອີກ 2 ຝ່າຍຊາບໂດຍດ່ວນ. ຝ່າຍທີ່ຮັບຜິດຊອບຕໍ່ການປົວລະບັດຮັກສາຫລັກໝາຍດັ່ງກ່າວ ຈະຕ້ອງເອົາມາດຕະການອັນຈຳເປັນເພື່ອບູລະນະ, ສ້ອມແປງຫລືສ້າງຫລັກໝາຍໃໝ່ຢູ່ໃນບ່ອນເກົ່າ ທີ່ສອດຄ່ອງ ກັບຂໍ້ມູນອັນເກົ່າ ໂດຍຊ້ອງໜ້າຂອງອີກສອງຝ່າຍ.

4. ການບູລະນະ, ການສ້ອມແປງຫລືການປັກຫລັກໝາຍຊາຍແດນຄືນໃໝ່ນັ້ນ ສາມຝ່າຍຈະເຮັດບົດບັນທຶກນຳກັນໄວ້. ໃນກໍລະນີມີຄວາມຈຳເປັນຈະປັກຫລັກໝາຍຊາຍແດນໃໝ່ ໃສ່ບ່ອນໃໝ່ທີ່ບໍ່ແມ່ນບ່ອນເກົ່າຂອງມັນ ສາມຝ່າຍຈະເຮັດເອກະສານຮ່ວມກັນໄວ້ ໂດຍຈະໄດ້ພັນລະນາກ່ຽວກັບທີ່ຕັ້ງຂອງຫລັກໝາຍຊາຍແດນໃໝ່ ແລະ ມູມທິດທາງ ແມ່ເຫລັກພ້ອມດ້ວຍໄລຍະຈາກຈຸດຄີບເສັ້ນຊາຍແດນໄປຫາຫລັກໝາຍຊາຍແດນດັ່ງກ່າວ. ເອກະສານດັ່ງກ່າວ ໃນເມື່ອຖືກສາມຝ່າຍລົງລາຍເຊັນຮ່ວມກັນໄວ້ແລ້ວຈະກາຍມາເປັນເອກະສານຕິດແນບເຂົ້າໃນສັນຍາສະບັບນີ້.

## ມາດຕາ 3

ສັນຍາສະບັບນີ້ຈະຖືກໃຫ້ສັດຕະຍາບັນ ຫລືຖືກຮັບຮອງເອົາຈາກແຕ່ລະຝ່າຍທີ່ສອດຄ່ອງກັບວິທີການທາງກົດໝາຍຂອງຕົນ ແລະ ຈະມີຜົນບັງຄັບໃຊ້ນັບແຕ່ມື້ທີ່ໄດ້ແລກປ່ຽນສານສັດຕະຍາບັນ ຫລືສານຮັບຮອງນຳກັນ.

ສັນຍາສະບັບນີ້ລົງນາມທີ່ຢ້າງກຸ້ງ, ໃນວັນທີ..........8 ເມສາ..........1994 ລວມເປັນສາມຕົ້ນສະບັບ. ແຕ່ລະສະບັບເປັນພາສາ ຈີນ, ພາສາລາວ, ພາສາມຽນມາ ແລະ ພາສາອັງກິດ, ທັງສີ່ພາສາມີຄຸນຄ່າເທົ່າທຽມກັນ.

| | | |
|---|---|---|
| 梁枫 | | |
| ຜູ້ຕາງໜ້າທີ່ມີອຳນາດເຕັມ | ຜູ້ຕາງໜ້າທີ່ມີອຳນາດເຕັມ | ຜູ້ຕາງໜ້າທີ່ມີອຳນາດເຕັມ |
| ຂອງລັດຖະບານ ແຫ່ງ | ຂອງລັດຖະບານ ແຫ່ງ | ຂອງລັດຖະບານ ແຫ່ງ |
| ສາທາລະນະລັດ | ສາທາລະນະລັດ ປະຊາທິປະໄຕ | ສະຫະພາບ |
| ປະຊາຊົນຈີນ | ປະຊາຊົນລາວ | ມຽນມາ |

ເອກກະສານຕິດແນບ 1.

ຮູບແບບ ຫລັກໝາຍຈຸດຄົບເສັ້ນຊາຍແດນ
ລະຫວ່າງ ສາມປະເທດ ຈີນ-ລາວ-ມຽນມາ

